ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກ ໂຍທາທິການ ແລະ ຂົນສົ່ງ

ເລກທີ: 8297 /ຍທຂ.ນວ

ວັນທີ: 19 AUG 2024

# ໜັງສືລາຍງານ.

ຂາເຂົ້າ | ສຳນັກງານອົງການປົກຄອງ ນວ | ໜ່ວຍງານບໍລິການປະຕູດຽວ

ເລກທີ: 4072

ວັນທີ: 5.9.24

ຮຽນ: ທ່ານ ຫົວໜ້າຫ້ອງວ່າການນະຄອນຫຼວງວຽງຈັນ ທີ່ນັບຖື ຢ່າງສູງ.

ເລື່ອງ: ຂໍລາຍງານກ່ຽວກັບການຂໍອະນຸຍາດ ແລ່ນລົດເມສາຍທາງຂົນສົ່ງມວນຊົນໃນນະຄອນຫຼວງວຽງຈັນ ຂອງ ບໍລິສັດ ກອນສິນ ໂດຍສານ ຈຳກັດຜູ້ດຽວ.

- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ສະບັບເລກທີ 444/ຈນວ, ລົງວັນທີ 07/04/2023;
- ອີງຕາມ ໜັງສືທາງລັດຖະການ ຫົວໜ້າຫ້ອງວ່າການນະຄອນຫຼວງວຽງຈັນ ສະບັບເລກທີ 451/ຫວນວ ລົງວັນທີ 07/ ມີນາ/2024. ຂໍອະນຸຍາດແລ່ນສາຍທາງລົດເມ ໃນນະຄອນຫຼວງວຽງຈັນ ຕາມການສົ່ງເສີມການທ່ອງທ່ຽວ ຂອງລັດຖະບານ ເພື່ອອຳນວຍຄວາມສະດວກການຂົນສົ່ງ.
- ອີງຕາມ ບົດບັນທຶກ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ລົງວັນທີ 21 /05 / 2024, ປຶກສາຫາລື ໜັງສືສະເໜີທາງລັດຖະບານ ສະບັບເລກທີ 451 /ຫກນວ. ກ່ຽວກັບການຂໍອະນຸຍາດແລ່ນລົດເມສາຍທາງໃນ ນະຄອນຫຼວງວຽງຈັນ ຂອງບໍລິສັດ ກອນສິນ ໂດຍສານ ຈຳກັດຜູ້ດຽວ.
- ອີງຕາມ ບົດບັນທຶກ ການລົງສຳຫຼວດສາຍທາງ ຄັ້ງວັນທີ 30 /05 /2024.

ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ຂໍຖືເປັນກຽດຢ່າງສູງ ຮຽນລາຍງານມາຍັງທ່ານຊາບວ່າ: ກ່ຽວກັບການຂໍອະນຸຍາດ ແລ່ນລົດເມສາຍໃນນະຄອນຫຼວງວຽງຈັນ ຂອງບໍລິສັດ ກອນສິນ ໂດຍສານ ຈຳກັດຜູ້ດຽວ ພະແນກໂຍທາທິການ ແລະ ຂົນສົ່ງນະຄອນຫຼວງ ໄດ້ເປີດກອງປະຊຸມ ປຶກສາຫາລື ຮ່ວມກັບ ລັດວິສະຫະກິດລົດເມ ເຫັນວ່າ ມີສາຍທາງທີ່ລົດເມລັດວິສະຫະກິດ ຍັງບໍ່ໄດ້ແລ່ນບໍລິການ ແລະ ຍັງບໍ່ເຂົ້າເຖິງເຂດນອກ ຈຶ່ງເຫັນດີໃຫ້ບໍລິສັດ ກອນສິນ ໂດຍສານ ທົດລອງແລ່ນ ຕາມເສັ້ນທາງທີ່ໄດ້ລົງສຳຫຼວດຄື: -

ເພື່ອປະຕິບັດຕາມລະບຽບຫຼັກການ ກ່ຽວກັບການເປີດສາຍທາງ ແລ່ນລົດຂົນສົ່ງໂດຍສານລົດເມ ປະຈຳທາງໃຫ້ຖືກຕ້ອງ ສອດຄ່ອງເໝາະສົມກັບສະພາບທ້ອງຖິ່ນ ແລະ ເຮັດໃຫ້ການດຳເນີນທຸລະກິດ ບໍລິການຂົນສົ່ງໂດຍສານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ຜ່ານການລົງສຳຫລວດສາຍທາງຕົວຈິງ ຂອງຄະນະວິຊາການ ແລະ ຜູ້ປະກອບການ ວັນທີ 30 /05 /2024 ເວລາ 09:00 ໂມງ ໄດ້ປະຊຸມກ່ຽວກັບການສຳຫຼວດ ສາຍທາງແລ່ນລົດໂດຍສານປະຈຳທາງ, ໂດຍມີຜູ້ເຂົ້າຮ່ວມ

ປະກອບມີ: ພະນັກງານວິຊາການຂົນສົ່ງ, ພະນັກງານວິຊາການ ໂຍທາເມືອງໄຊທານີ, ຫົວໜ້າບໍລິສັດ ກອນສົນ ໂດຍສານ ຂົນສົ່ງ ແລະ ພະນັກງານ ວິຊາການ ລັດວິສະຫະກິດລົດເມ ນະຄອນຫຼວງວຽງຈັນ ( ມີເອກະສານຊ້ອນທ້າຍ ).

## I ສາຍທາງແລ່ນລົດໂດຍສານ:

- ກ່ຽວກັບສາຍທາງທີ່ຈະແລ່ນລົດເມປະຈຳທາງ ແມ່ນ ຈຸດເລີ່ມຕົ້ນ ແມ່ນຢູ່ສີ່ແຍກໄຟອຳນາດ ເພື່ອເຊື່ອມຕໍ່ໃສ່ ໂຄງການລົດເມ BRT, ໂດຍນຳໃຊ້ເສັ້ນທາງ ທາງ13 ໃຕ້. ລັດວິສະຫະກິດລົດເມ ນະຄອນຫຼວງບໍ່ໄດ້ແລ່ນ, ມີ 03 ສາຍທາງດັ່ງນີ້:

1. ເລີ່ມແຕ່ ສີ່ແຍກໄຟອຳນາດ ດົງໂດກ ຫາ ບ້ານໂຄກສີວິໄລ ເມືອງ ໄຊທານີ ນວ. ( ຫຼັກ 21 )
2. ເລີ່ມແຕ່ ສີ່ແຍກໄຟອຳນາດ ດົງໂດກ ຫາ ບ້ານປາກຊາບ ເມືອງໄຊທານີ ນວ
3. ເລີ່ມແຕ່ ສີ່ແຍກໄຟອຳນາດ ດົງໂດກ ຫາ ບ້ານບໍ່ເຫຼັກ ເມືອງໄຊທານີ ນວ. ( ຫຼັກ36 )

## II ໄລຍະທາງແລ່ນລົດໂດຍສານ :

ກ. ເລີ່ມແຕ່ ສີ່ແຍກໄຟອຳນາດ ດົງໂດກ ຫາ ບ້ານໂຄກສີວິໄລ ເມືອງ ໄຊທານີ ນວ. ( ຫຼັກ 21 ) ມີໄລຍະທາງ 12.3 ກິໂລແມັດ

ຂ. ເລີ່ມແຕ່ ສີ່ແຍກໄຟອຳນາດ ດົງໂດກ ຫາ ບ້ານປາກຊາບ ເມືອງໄຊທານີ ນວ. ມີໄລຍະທາງ 23.6 ກິໂລແມັດ.

ຄ. ເລີ່ມແຕ່ ສີ່ແຍກໄຟອຳນາດ ດົງໂດກ ຫາ ບ້ານບໍ່ເຫຼັກ ເມືອງໄຊທານີ ນວ. ( ຫຼັກ36 ). ມີໄລຍະທາງ 27.3ກິໂລແມັດ

ລວມໄລຍະທາງຂອງສາຍທາງມີ 63.2 ກິໂລແມັດ

## III ສະພາບເສັ້ນທາງແລ່ນລົດໂດຍສານ :

- ສາຍທາງທີ 1. ເລີ່ມແຕ່ໄຟອຳນາດ ດົງໂດກ ຫາ ບ້ານ ໂຄກສີວິໄລ ( ຫຼັກ21 ) ປະກອບມີ ປະເພດທາງ: ປູຢາງ ຍາວ 12.3 Km, ເສັ້ນທາງມີຄວາມສະດວກ ແລະ ມີຊຸມຊົນ.

- ສາຍທາງທີ2. ເລີ່ມແຕ່ໄຟອຳນາດ ດົງໂດກ ຫາ ປາກຊາບ ປະກອບມີ ປະເພດເສັ້ນທາງ: ທາງປູຢາງ ສາມາດໃຊ້ງານໄດ້ດີ ມີຄວາມຍາວ 23.6 Km, ທາງເຂົ້າຫຼັກ 24 ຫາ ປາກຊາບ ເສັ້ນທາງເປັນທາງປູຢາງ , ລວງກວ້າງໜ້າທາງ 6 m, ຍາວ 8.7Km, ເປັນເຂດຊຸມຊົນບໍ່ໜາແໜ້ນປານໃດ ແລະ ເສັ້ນທາງມີເປເພໜ້ອຍໜຶ່ງ.

- ສາຍທາງທີ 3. ເລີ່ມແຕ່ໄຟອຳນາດ ຫາ ບ້ານ ບໍ່ເຫຼັກ ( ຫຼັກ 36 ) ປະກອບມີ ປະເພດປູຢາງ ສາມາດໃຊ້ງານໄດ້ດີ ທາງສະດວກ ເປັນຊຸມຊົນບາງເຂດ ມີຄວາມຍາວ 27.3 KM.

## IV ສະພາບເຖດຖະກິດ ແລະ ຄວາມຄິດເຫັນຂອງປະຊາຊົນ:

- ແຕ່ສີ່ແຍກໄຟອຳນາດດົງໂດກ ຫາ ບ້ານໂດກສີວິໄລ ( ຫຼັກ21 ), ສາຍທາງ ແຕ່ສີ່ແຍກໄຟອຳນາດດົງໂດກ ຫາ ບ້ານປາກຊາບ ແລະ ສາຍທາງ ແຕ່ສີ່ແຍກໄຟອຳນາດດົງໂດກ ຫາ ບ້ານບໍ່ເຫຼັກ ( ຫຼັກ36) ເມືອງໄຊທານີ ນະຄອນຫຼວງວຽງຈັນ ມີປະຊາຊົນອາໄສຢູ່ຕະຫຼອດສາຍທາງ, ມີບ້ານລຽນບ້ານ, ຈຳນວນບ້ານທັງໝົດ 18 ບ້ານ, ປະຊາກອນທັງໝົດ 39 ພັນກ່ວາຄົນ, ໝູ່ບ້ານທີ່ທາງລົດໄປຜ່ານ ເຊິ່ງປະກອບມີ: ບ້ານ ບ້ານສະພັງເມິກ, ໄຊ, ໄຊສະຫວ່າງ, ດອນໜູນ, ດົງສ້າງຫີນ,ນ ໂພຄຳ, ນາລ້ອມ, ໂດກສີວິໄລ, ໂນນທອງ, ໃຜ່ລ້ອມ, ນາມົນ, ນາພອກ, ປາກຊາບ, ສົມສະຫ້ອນ, ດົງຄວາຍ, ນາຜາສຸກ, ບໍ່ເຫຼັກ, ແລະ ບ້ານອື່ນໆ...
- ບັນດາໝູ່ບ້ານທີ່ອາໄສຢູ່ຕະຫຼອດສາຍທາງທີ່ລົດໂດຍສານໄປຜ່ານ ສ່ວນຫຼາຍ ແມ່ນປະກອບອາຊີບ, ຄ້າຂາຍ, ພະນັກງານ, ທຳການຜະລິດ ປູກຝັງ ແລະ ລ້ຽງສັດ ເປັນສ່ວນໃຫ່ຍ.
- ຈຳນວນຜູ້ໂດຍສານທີ່ຈະມານຳໃຊ້ລົດໂດຍສານປະຈຳທາງ ຄິດເປັນເປີເຊັນແມ່ນ: ຈາກເທດສະບານເມືອງໄຊທານີປະມານ 30% ແລະ 70% ແມ່ນປະຊາຊົນທີ່ອາໄສຢູ່ລຽບຕາມສາຍທາງ.

V ສັງລວມ:

ໂດຍຜ່ານການຄົ້ນຄ້ວາປຶກສາຫາລື ທັງ 4 ຝ່າຍ ຄື: ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ, ລັດວິສະຫະກິດລົດເມ ນະຄອນຫຼວງວຽງຈັນ, ຫ້ອງການ ຍທຂ ເມືອງໄຊທານີ ແລະ ບໍລິສັດ ກອນສິນ ໂດຍສານ ຈຳກັດຜູ້ດຽວ ເຫັນດີເປັນເອກະພາບກັນດັ່ງນີ້:

1. ໄດ້ຕົກລົງແລ່ນລົດໂດຍສານຮ່ວມກັນມີຄື: ໃຫ້ບໍລິສັດ ກອນສິນ ໂດຍສານ ຈຳກັດຜູ້ດຽວ ແລ່ນບໍລິການແມ່ນ ບົດບັນທຶກ ທີ່ໄດ້ແນະນຳ ສາຍທາງທີ່ ລັດວິສະຫະກິດລົດເມ ນວ, ຍັງບໍ່ມີແຜນແລ່ນເທື່ອ ປະກອບມີ 3 ສາຍທາງ, ເມືອງ ໄຊທານີ ນະຄອນຫຼວງວຽງຈັນ ໂດຍນຳນຳໃຊ້ລົດໂດຍສານປະເພດ ລົດເມ 41 ບ່ອນນັ່ງ.

2. ຜ່ານການສຳຫລວດສາຍທາງອີງໃສ່ບໍລິມາດຜູ້ໂດຍສານ ແລະ ເງື່ອນໄຂດ້ານຄວາມເປັນໄປໄດ້ຄື:

- ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫລວງວຽງຈັນ ເຫັນວ່າມີຄວາມສາມາດເປັນໄປໄດ້ເພາະເປັນໄລຍະເວລາຊົ່ວໂມງອອກລົດອອກ ເລີ່ມຕອນເຊົ້າລົດອອກ: 7:00ມ ຮອດ 17:00ມ. 1ຊົ່ວໂມງຖ້ຽວໜຶ່ງ ເຫັນວ່າເປັນການອຳນວຍຄວາມສະດວກໃຫ້ຜູ້ໂດຍສານ ຊ່ວງຂາໄປ-ຂາກັບ, ສະເລ່ຍຜູ້ໂດຍສານປະມານ 10-15 ຄົນ.

ຜ່ານການສຳຫລວດສາຍທາງທັງສາມຝ່າຍ, 3 ສາຍທາງ: ທາງດ້ານວິຊາການ ເຫັນວ່າມີຄວາມສາມາດເປີດບໍລິການສາຍທາງດັ່ງກ່າວ, ສາມາດເປັນໄປໄດ້ ຄາດຄະເນວ່າໃນອະນາຄົດ ຈະມີຜູ້ໂດຍສານເພີ່ມຂຶ້ນນັບມື້ນັບຫຼາຍ.

ດັ່ງນັ້ນ, ຈຶ່ງລາຍງານມາຍັງ ທ່ານເພື່ອຊາບ ແລະ ຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດດ້ວຍ.

ຫົວໜ້າພະແນກ

ພະແນກ ໂຍທາທິການ ແລະ ຂົນສົ່ງ

ສີວອນ ຊັບທະວີ
Mr.Syvone SUBTHAVY

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ນະຄອນຫຼວງວຽງຈັນ**

ຫ້ອງວ່າການ

ເລກທີ: 1693/ຫວນວ

ວັນທີ: 18 ກັນຍາ 2024

## ໜັງສືທາງລັດຖະການ

**ຮຽນ:** - ທ່ານຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ;
- ທ່ານຜູ້ອຳນວຍການລັດວິສາຫະກິດລົດເມ ນະຄອນຫຼວງວຽງຈັນ.

**ເລື່ອງ:** ການຂໍອະນຸຍາດແລ່ນລົດເມສາຍທາງຂົນສົ່ງມວນຊົນໃນນະຄອນຫຼວງວຽງຈັນ ຂອງບໍລິສັດ ກອນສິນ ໂດຍສານ ຈຳກັດຜູ້ດຽວ.

- ອີງຕາມ ໜັງສືລາຍງານຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ສະບັບເລກທີ 8297/ຍທຂ.ນວ, ລົງວັນທີ 19 ສິງຫາ 2024;
- ອີງຕາມ ການຊີ້ນຳຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ຄັ້ງວັນທີ 09 ກັນຍາ 2024.

ຫ້ອງວ່າການນະຄອນຫຼວງວຽງຈັນ ຂໍຖືເປັນກຽດຮຽນສະເໜີການຊີ້ນຳຂອງຂັ້ນເທິງ ມາຍັງບັນດາທ່ານ ດັ່ງນີ້: **"ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ວິເຄາະວິໄຈລະອຽດ ເພື່ອບໍ່ເປັນການສ້າງຄວາມສັບສົນໃນລະບົບຂົນສົ່ງສາທາລະນະ ແລະ ລັດວິສາຫະກິດລົດເມ ນະຄອນຫຼວງວຽງຈັນ ຈະຂະຫຍາຍກິດຈະການແນວໃດ ?, ຄວາມຕ້ອງການຂອງສັງຄົມແນວໃດ ?, ສຳຄັນແມ່ນໃຫ້ບັນລຸເປົ້າໝາຍໃນການແກ້ໄຂຫຍັງ ? ກະກຽມລາຍງານຕໍ່ກອງປະຊຸມເຈົ້າຄອງ-ຮອງເຈົ້າຄອງນະຄອນຫຼວງວຽງຈັນ ເພື່ອພິຈາລະນາ, ສ່ວນວັນເວລາລາຍງານ ແມ່ນຈະແຈ້ງໃຫ້ຊາບຕາມພາຍຫຼັງ".**

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງບັນດາທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມການຊີ້ນຳຂ້າງເທິງນີ້ດ້ວຍ.

**ຫົວໜ້າຫ້ອງວ່າການນະຄອນຫຼວງວຽງຈັນ**

ນະຄອນຫຼວງວຽງຈັນ ຫ້ອງວ່າການ

ປອ. ໄພຄຳ ໄຊຍະສອນ

<u>ບ່ອນສົ່ງ:</u>

- ເຈົ້າຄອງ-ຮອງເຈົ້າຄອງນະຄອນຫຼວງວຽງຈັນ ທ່ານລະ 1 ສະບັບ;
- ເກັບມ້ຽນສຳເນົາ 2 ສະບັບ.



ໂທ-ແຟັກ: 021 260206; E-mail: vtecabinet@live.com